ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກົມພາສີ

ພະແນກ ພສປ

ເລກທີ 947 /ພສປ

ນະຄອນຫຼວງວຽງຈັນ, ວັນທີ 11 ຕຸລາ 2021

# ແຈ້ງການ

ເຖິງ: ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ພາຍໃນ ນະຄອນຫຼວງວຽງຈັນ.

ເລື່ອງ: ການແກ້ໄຂ ຍານພາຫະນະນຳເຂົ້າບໍ່ຖືກຕ້ອງ ທີ່ມີໄວ້ໃນຄອບຄອງ, ນຳໃຊ້ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ.

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ: 81/ສພຊ, ລົງວັນທີ 29 ມິຖຸນາ 2020;
- ອີງຕາມ ຂໍ້ຕົກລົງຂອງກະຊວງການເງິນ ສະບັບເລກທີ 2059/ກງ, ລົງວັນທີ 29 ເມສາ 2021 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມພາສີ;
- ອີງຕາມ ແຈ້ງການແນະນຳຂອງກົມພາສີ ສະບັບເລກທີ 05041/ກພສ, ລົງວັນທີ 8 ຕຸລາ 2021 ກ່ຽວກັບ ການຂຶ້ນບັນຊີ ຍານພາຫະນະນຳເຂົ້າບໍ່ຖືກຕ້ອງ ທີ່ມີໄວ້ໃນຄອບຄອງ, ນຳໃຊ້ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໃນຂອບເຂດທົ່ວປະເທດ.

ພະແນກ ສືບສວນ-ສອບສວນ ແລະ ປາບປາມການລັກລອບໜີພາສີ ຂໍແຈ້ງມາຍັງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ພາຍໃນນະຄອນຫຼວງວຽງຈັນ ຜູ້ທີ່ຄອບຄອງ, ນຳໃຊ້ຍານພາຫະນະນຳເຂົ້າບໍ່ຖືກຕ້ອງ ໃຫ້ນຳເອົາເອກະສານ ແລະ ຍານພາຫະນະຕົວຈິງ ມາແຈ້ງຂຶ້ນບັນຊີ ກັບພະແນກ ສືບສວນ-ສອບສວນ ແລະ ປາບປາມການລັກລອບໜີພາສີ ເພື່ອເກັບກຳຂໍ້ມູນ ທີ່ໄດ້ມາຂອງຍານພາຫະນະ ແລະ ກວດກາລະບົບເຕັກນິກ ຍານພາຫະນະຕົວຈິງ ເພື່ອແກ້ໄຂ ເສຍພາສີ-ອາກອນ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ.

ກຳນົດເວລາຮັບແຈ້ງຂຶ້ນບັນຊີ ຍານພາຫະນະ ແມ່ນເລີ່ມແຕ່ວັນທີ 12 ຕຸລາ 2021 ຫາ 05 ພະຈິກ 2021. ຖ້າມາແຈ້ງເກີນເວລາທີ່ກຳນົດໄວ້ ຫຼື ເຈົ້າໜ້າທີ່ກວດກາ, ປົດຍານພາຫະນະ ຈະຖືກປະຕິບັດມາດຕະການບັງຄັບໃຊ້ກົດໝາຍ ຢ່າງເຂັ້ມງວດ.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດດ້ວຍ.

ຫົວໜ້າພະແນກ

ວ່ອງທັນ ສະອິດທິລາດ

ຜູ້ປະສານງານ:

- ຫ້ອງການ 021 451580
- ທ່ານ ນາງ ວັນນະສອນ ກິມມະນີວົງ 020 99874909
- ທ່ານ ນາງ ໄພມະນີ ກຸນລະບຸດ 020 28140434